Laos

FORWARD

ຈົດໝາຍຂ່າວປະຈຳໄຕມາດ ຂອງອົງການສາກົນ ບໍລິການປະຊາຊົນ

# PSI ລາວ ວັນນີ້ ຈົດໝາຍຂ່າວ



ເມສາ -ມິຖຸນາ 2020



## ໂຄງການ ຫ້ອງປະຕິບັດງານເຫດການສຸກເສີນດ້ານສາທາລະນະສຸກ

### ຕິດຕາມຊຸກຍູ້ ເພື່ອເຝົ້າລະວັງ ແລະ ກຽມໂຕ້ຕອບຕໍ່ການລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ

ໃນວັນທີ 3/5/2020 – 2/7/2020 ກົມຄວບຄຸມພະຍາດຕິດຕໍ່ ກະຊວງສາທາລະນະສຸກ ຮ່ວມກັບ ອົງການອະນາໄມໂລກ, ອົງການ CHAI ແລະ ອົງການສາກົນ ບໍລິການປະຊາຊົນ ຫຼື PSI/Laos ໄດ້ລົງຕິດຕາມຊຸກຍູ້ຫ້ອງປະຕິບັດງານເຫດການສຸກເສີນດ້ານສາທາລະນະສຸກຂັ້ນແຂວງ ທົ່ວປະເທດ ໃນການເຝົ້າລະວັງ ແລະ ໂຕ້ຕອບຕໍ່ການລະບາດຂອງພະຍາດ COVID-19 ພ້ອມທັງນຳສະເໜີຄວາມສຳຄັນ ແລະ ຄວາມຈຳເປັນໃນ ການນຳໃຊ້ຫ້ອງປະຕິບັດງານເຫດການສຸກເສີນທາງດ້ານສາທາລະນະສຸກ (EOC) ເຂົ້າເປັນຈຸດສູນລວມ ການປະສານງານໃນການໂຕ້ຕອບ ຕິດຕາມສັງລວມຂໍ້ມູນບົດລາຍງານປະຈຳວັນ ພ້ອມທັງແນະນຳ ແບບຟອມການລາຍງານສະພາບການເປັນລາຍອາທິດ ເພື່ອໃຫ້ໄດ້ຂໍ້ມູນຄົບຖ້ວນສົມບູນ ແລະ ແກ້ໄຂຂໍ້ຄົງຄ້າງພ້ອມທັງປະເມີນຄວາມພ້ອມຂອງແຕ່ລະສະຖານທີ່ ນອກນັ້ນກໍເພື່ອໃຫ້ແຕ່ລະຂະແໜງການທີ່ກ່ຽວຂ້ອງຮູ້ໄດ້ເຖິງຄວາມໝາຍ, ຄວາມສຳຄັນ ແລະ ຄວາມຈຳເປັນໃນການນຳໃຊ້ EOC ເປັນຈຸດສູນລວມການປະສານງານໃນການໂຕ້ຕອບ ແລະ ເຫັນໄດ້ເຖິງຄວາມພ້ອມແຕ່ລະສະຖານທີ່ເພື່ອປັບປຸງໃນອະນາຄົດ



## ໂຄງການ ຊອກຄົ້ນກໍລະນີ ແລະ ການປິ່ນປົວວັນນະໂລກ

### ສືບຕໍ່ພັດທະນາຄວາມສາມາດໃນການຊອກຄົ້ນກໍລະນີວັນນະໂລກໃໝ່

ອົງການ PSI/Laos ຮ່ວມກັບ ພະແນກສາທາລະນະສຸກແຂວງຫຼວງພະບາງ, ສູນວັນນະໂລກແຫ່ງຊາດ ຈັດຝຶກອົບຮົມຄືນເພື່ອສ້າງຄວາມເຂັ້ມແຂງໃຫ້ຜູ້ຮັບຜິດຊອບ ແລະ ຜູ້ໃຫ້ບໍລິການຂັ້ນເມືອງ, ຂັ້ນແຂວງ ໂດຍສະເພາະແມ່ນ ຜູ້ໃຫ້ບໍລິການ ຫ້ອງກວດພະຍາດເອກະຊົນ ແລະ ຮ້ານຂາຍຢາ ທີ່ເປັນເຄືອຂ່າຍຂອງ ອົງການ PSI ກ່ຽວກັບວຽກງານການຊອກຄົ້ນກໍລະນີວັນນະໂລກໃໝ່ ທີ່ແຂວງຫຼວງພະບາງ ຄັ້ງວັນທີ 28-29/05/2020, ໂດຍມີຜູ້ເຂົ້າຮ່ວມຝຶກອົບຮົມທັງໝົດ 37 ທ່ານ.

ການຝຶກອົບຮົມຄັ້ງນີ້ໄດ້ຮັບຜົນສຳເລັດຢ່າງຈົບງາມ ເຮັດໃຫ້ບັນດາຜູ້ເຂົ້າຮ່ວມໄດ້ຍົກລະດັບ ແລະ ເຂົ້າໃຈເພີ່ມຂຶ້ນໃນການຊອກຄົ້ນກໍລະນີວັນນະໂລກໃໝ່ໃຫ້ມີປະສິດທິພາບ ແລະ ຊັດເຈນຂຶ້ນເພື່ອໃຫ້ປະຊາຊົນລາວປອດໄພ ແລະ ປາສະຈາກ ວັນນະໂລກ.



## ໂຄງການສຸຂະພາບແມ່ຍິງ

### ເສີມສ້າງຄວາມຮູ້ສູ່ການຮັບໃຊ້ປະຊາຊົນໃຫ້ມີປະສິດທິຜົນສູງສຸດ

ໃນວັນທີ 8/6/2020 ອົງການສາກົນ ບໍລິການປະຊາຊົນ ຫຼື PSI/Laos ຮ່ວມກັບ ສະມາຄົມນາລີເວດ ສູນຕິສາດ ກະຊວງສາທາລະນະສຸກ ໄດ້ຈັດຝຶກອົບຮົມຄືນການເປັນຄູຝຶກຂັ້ນແຂວງ ໃຫ້ແກ່ຊ່ຽວຊານປະສູດພະຍາດຍິງ ໃນ 1 ນະຄອນຫຼວງ ແລະ 17 ແຂວງທົ່ວປະເທດ ກ່ຽວກັບ ການລົງຕິດຕາມຊຸກຍູ້ວຽກງານປ້ອງກັນການລຸລູກທີ່ບໍ່ປອດໄພໂດຍການນຳໃຊ້ເຕັກນິກການສື່ສານ ແລະ ການແນະນຳທີ່ສ້າງສັນ.ໃນການຝຶກອົບຮົມຄັ້ງນີ້ ນັກສຳມະນາກອນໄດ້ຮູ້ເຖິງທັກສະການເປັນຄູຝຶກທີ່ດີ, ຂັ້ນຕອນການລົງຕິດຕາມຊຸກຍູ້, ເຂົ້າໃຈເຖິງຈັນຍາທຳໃນການດູແລສຸຂະພາບ ແລະ ການນຳໃຊ້ເຕັກນິກການສື່ສານ ແລະ ການແນະນຳທີ່ສ້າງສັນແກ່ຜູ້ໃຫ້ບໍລິການໃນແຕ່ລະສະຖານທີ່. ນອກນັ້ນຍັງໄດ້ມີການແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນໄດ້ເປັນຢ່າງດີ ພ້ອມທັງໄດ້ຍົກເອົາປະສົບການຕົວຈິງມາປຶກສາຫາລືກັນອີກດ້ວຍ, ທັງໝົດກໍ່ເພື່ອປົກປ້ອງສຸຂະພາບຂອງແມ່ຍິງ ແລະ ປະຊາຊົນລາວ

# ພາລະກິດ ຂອງອົງການ PSI ລາວ

**PSI ຊ່ວຍໃຫ້ປະຊາຊົນໃນຂົງເຂດປະເທດທີ່ກຳລັງພັດທະນາກ້າວໄປສູ່ຊີວິດທີ່ມີສຸຂະພາບດີ ແລະ ການວາງແຜນຄອບຄົວທີ່ພວກເຂົາຕ້ອງການໄດ້ງ່າຍຂຶ້ນ.**

# ໂຄງການ ຂອງອົງການ PSI ລາວ

| ສຸຂະພາບແມ່ຍິງ | ການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ (ພຕພ) | ຊອກຄົ້ນກໍລະນີ ແລະ ການປິ່ນປົວວັນນະໂລກ | ການຄຸ້ມຄອງກໍລະນີພະຍາດໄຂ້ມາລາເຣຍ | ສ້າງຄວາມເຂັ້ມແຂງໃຫ້ກັບ ພາກລັດ ສຳລັບການຄຸ້ມຄອງພະຍາດເບົາຫວານໃນ ສປປ ລາວ | ເສີມສ້າງຄວາມເຂັ້ມແຂງໃນອົງກງານຫ້ອງປະຕິບັດການເຫດການສຸກເສີນ ດ້ານສາທາລະນະສຸກ ເພື່ອສະກັດກັ້ນການລະບາດຂອງພະຍາດຕິດຕໍ່ ແລະ ກຳຈັດພະຍາດມາລາເຣຍ. |
|---|---|---|---|---|---|
| ໄລຍະເວລາ: 2020-2022 | ໄລຍະເວລາ: 2018-2020 | ໄລຍະເວລາ: 2018-2020 | ໄລຍະເວລາ: 2020-2022 | ໄລຍະເວລາ: 2017-2020 | ໄລຍະເວລາ: 2018 - 2022 |
| ຜູ້ໃຫ້ທຶນ: ມູນນິທິເອກະຊົນ | ຜູ້ໃຫ້ທຶນ: ກອງທຶນໂລກ | ຜູ້ໃຫ້ທຶນ: ກອງທຶນໂລກ | ຜູ້ໃຫ້ທຶນ: ມູນນິທິ Bill and Melida Gates | ຜູ້ໃຫ້ທຶນ: ມູນນິທິເບົາຫວານໂລກ | ຜູ້ໃຫ້ທຶນ: ມູນນິທິ Bill and Melida Gates |
| **ຈຸດປະສົງ:**<br>ຮັບປະກັນໃຫ້ແມ່ຍິງ ແລະ ເດັກຍິງທຸກຄົນຈະສາມາດເຂົ້າເຖິງການບໍລິການປ້ອງກັນການລຸລູກທີ່ບໍ່ປອດໄພ ແລະ ການບໍລິການວາງແຜນຄອບຄົວແບບຄົບຊຸດ | **ຈຸດປະສົງ:**<br>ຫຼຸດຜ່ອນການແຜ່ເຊື້ອໂລກເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ ໂດຍການເພີ່ມການ ເຂົ້າເຖິງການບໍລິການ ແລະ ຜະລິດຕະພັນທີ່ມີຄຸນນະພາບສູງ, ສາມາດຊື້ໄດ້ ຫຼື ຮັບການປິ່ນປົວຟຣີ ລວມມີ ຖົງຢາງອະນາໄມ ນ້ຳເບີວັນ | **ຈຸດປະສົງ:**<br>ເພີ່ມທະວີການຊອກຄົ້ນກໍລະນີວັນນະໂລກ ແລະ ສະໜອງຢາປິ່ນປົວຜ່ານພາກສ່ວນຫ້ອງກວດພະຍາດ ແລະ ຮ້ານຂາຍຢາເອກະຊົນ | **ຈຸດປະສົງ:**<br>ເພື່ອສະໜັບສະໜູນການກ້າວເຂົ້າສູ່ການລົບລ້າງ ໄຂ້ມາລາເຣຍໃນ ສປປ ລາວ ແລະ ເພີ່ມທະວີຄວາມເຂັ້ມແຂງໃນການຄຸ້ມຄອງການດຳເນີນງານຂອງພາກເອກະຊົນສຳລັບການກວດ, ການປິ່ນປົວ, ການລາຍງານ ເຊື້ອພະຍາດໄຂ້ມາລາເຣຍໂດຍອີງຕາມນະໂຍບາຍການປິ່ນປົວແຫ່ງຊາດ | **ຈຸດປະສົງໂຄງການ:**<br>ການບໍລິການກ່ຽວກັບເບົາຫວານປະເພດ 2 , ເບົາຫວານໃນແມ່ຍິງຖືພາ ແລະ ຄວາມດັນເລືອດສູງໄດ້ຮັບການພັດທະນາໃຫ້ດີຂຶ້ນ, ຂະຫຍາຍໃຫ້ກວ້າງຂວາງ ແລະ ມີມາດຕະຖານສູງ | **ຈຸດປະສົງໂຄງການ:**<br>ສະໜັບສະໜູນ ສປປ ລາວ, ກະຊວງສາທາລະນະສຸກ ຢ່າງເຕັມຄວາມສາມາດ ໃນການກວດກາຊອກຫາ ແລະ ໂຕ້ຕອບຕໍ່ ເຫດການສຸກເສີນທາງດ້ານສາທາລະນະສຸກ ແລະ ການລະບາດຂອງບັນດາພະຍາດ (ລວມເຖິງພະຍາດ ມາລາເຣຍ) ແລະ ສາມາດຫຼຸດຜ່ອນຜົນກະທົບຂອງພະຍາດທີ່ອາດເກີດຂື້ນໃນຊຸມຊົນ. |
| **ຜະລິດຕະພັນ ແລະ ການບໍລິການ:**<br>• ຮ່ວງອະນາໄມ<br>• ຢາກິນຄຸມກຳເນີດ<br>• ຢາສັກຄຸມກຳເນີດ<br>• ຢາຝັງຄຸມກຳເນີດ<br>• ຖົງຢາງອະນາໄມ<br>• ຢາ Misoprostol ສຳລັບການເບິ່ງແຍງ ຫຼັງການລຸລູກ<br>• ຢາ Mifepristol ສຳລັບປ້ອງກັນການລຸລູກທີ່ບໍ່ປອດໄພ | **ຜະລິດຕະພັນ ແລະ ການບໍລິການ:**<br>• ຖົງຢາງອະນາໄມ ນ້ຳເບີວັນ<br>• ການກວດຫາເຊື້ອໂລກເອດ<br>• ສິ່ງຕໍ່ຮັບການປິ່ນປົວ | **ຜະລິດຕະພັນ ແລະ ການບໍລິການ:**<br>• ການກວດຫາເຊື້ອວັນນະໂລກ<br>• ສົ່ງຕໍ່ຮັບການປິ່ນປົວ | **ຜະລິດຕະພັນ ແລະ ການບໍລິການ:**<br>ຈັດຕັ້ງປະຕິບັດການຝຶກອົບໃຫ້ແກ່ຜູ້ໃຫ້ບໍລິການພາກເອກະຊົນສຳລັບການກວດ, ປິ່ນປົວ ແລະ ລາຍງານກ່ຽວກັບເຊື້ອພະຍາດໄຂ້ມາລາເຣຍ, ເຊິ່ງຜູ້ໃຫ້ບໍລິການທີ່ເຂົ້າຮ່ວມການຝຶກອົບຮົມການ ແມ່ນຈະຕ້ອງບໍລິການກວດເລືອດໃຫ້ແກ່ຄົນເຈັບດ້ວຍເຈ້ຍຈຸ່ມສຳລັບກໍລະນີສົງໄສທີ່ກ່ຽວຂ້ອງກັບພະຍາດໄຂ້ມາລາເຣຍ ແລະ ຈະໄດ້ໃຫ້ຢາປິ່ນປົວໃນກໍລະນີທີ່ຢືນຢັນວ່າຄົນເຈັບໄດ້ຮັບພະຍາດໄຂ້ມາລາເຣຍ. | **ຜະລິດຕະພັນ ແລະ ການບໍລິການທີ່ມີ:**<br>ສະໜັບສະໜູນກະຊວງສາທາລະນະສຸກໃນການພັດທະນາຄູ່ມືແຫ່ງຊາດ, ເສີມສ້າງຄວາມເຂັ້ມແຂງທາງດ້ານວິຊາການ ໂດຍການສ້າງຄູ່ມືແຫ່ງຊາດ, ຝຶກອົບຮົມໃຫ້ກັບທ່ານໝໍ, ພະຍາບານ ແລະ ສ້າງເຄື່ອງມືກວດກາຄຸນະພາບການຄຸ້ມຄອງພະຍາດເບົາຫວານປະເພດສອງ, ເບົາຫວານໃນແມ່ຍິງຖືພາ ແລະ ພະຍາດຄວາມດັນເລືອດ | **ຂົງເຂດການສ້າງຄວາມອາດສາມາດ:**<br>ໂຄງຮ່າງໃນການປະຕິບັດງານຂອງຫ້ອງປະຕິບັດການສຸກເສີນທາງດ້ານສາທາລະນະສຸກໄດ້ຮັບອະນຸມັດ ປະກອບພ້ອມລະບົບການເຝົ້າລະວັງ ແລະ ລະບົບພາລາທິການ ທີ່ມີປະສິດທິພາບ, ພ້ອມທັງສ້າງແຜນເຊື່ອມສານໃນການປະຕິບັດເພື່ອໃຫ້ມີຄວາມຍືນຍົງໃນກະຊວງສາທາລະນະສຸກຕໍ່ໄປ. |

# ຂໍ້ມູນຕິດຕໍ່ ຂອງອົງການ PSI ລາວ



ທ່ານ ອີຣິກ ຊີສ໌ເທດທ໌
ຜູ້ຕາງໜ້າ ອົງການ PSI ປະຈຳລາວ
020-5552-4414
eseastedt@psi.org



ທ່ານ ວຽງສະໄໝ ວົງຄຳຊາວ
ອຳນວຍການ PSI ລາວ
020-5993-1341
viengsamay@psilaos.org



ທ່ານ ທອງດີ ພົມມະວົງສາ
ອຳນວຍການຝ່າຍບໍລິຫານໂຄງການ
020-5566-9883
thongdyp@psilaos.org



ທ່ານ ນາງ ຄູນຄຳ ໄຊມູນວົງ
ອຳນວຍການຝ່າຍໂຄງການ
020-2280-4488
khounkham@psilaos.org



ທ່ານ ນາງ ລັດຕະນາ ສິນລາດຊະວົງ
ອຳນວຍການຝ່າຍການຕະຫຼາດ ແລະ ການສື່ສານ
020-5552-9845
lattana@psilaos.org



ທ່ານ ນາງ ໄຊຊະນະ ພະນະລາສີ
ອຳນວຍການຝ່າຍຄົ້ນຄວ້າ, ຕິດຕາມ ແລະ ປະເມີນຜົນ
020-5551-7377
sphanalasy@psilaos.org



ທ່ານ ນາງ ພຽງພັກ ຄອນສະຫວັນ
ອຳນວຍການຝ່າຍການເງິນ, ການບັນຊີ ແລະ ບໍລິຫານ
020-5911-9945
phiengphack@psilaos.org

ຫ້ອງການ PSI ລາວ ຕັ້ງຢູ່: ຖະໜົນ T4, ໜ່ວຍ 16, ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ຕູ້ໄປສະນີ: 8723, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ: (+856 21) 330 429-32 ແຟັກ: (+856 21) 330 428

**VISIT US**
PSILAOS.ORG
HUKMIPLAN.COM

**LIKE US**
FACEBOOK.COM/PSILAOSPDR
FACEBOOK.COM/HUKMIPLAN
FACEBOOK.COM/NO1CONDOM

**SUBSCRIBE US**
YOUTUBE/PSILAOS